# AltaMed
ການດູແລສຸຂະພາບທີ່ມີຄຸນນະພາບໂດຍບໍ່ມີຂໍ້ຍົກເວັ້ນ™

## ແຈ້ງການກ່ຽວກັບບົດສະຫຼຸບການປະຕິບັດການຮັກສາຂໍ້ມູນສ່ວນຕົວ
*ບົດສະຫຼຸບສະບັບນີ້ອະທິບາຍສິດຂອງທ່ານ ແລະ ຄວາມຮັບຜິດຊອບບາງປະການຂອງທ່ານເພື່ອຈະຊ່ວຍທ່ານ.*

## ສິດຂອງທ່ານ
*ເມື່ອເປັນເລື່ອງຂອງຂໍ້ມູນດ້ານສຸຂະພາບຂອງທ່ານ, ທ່ານມີສິດບາງປະການ.*

### ຮັບສຳເນົາເອກະສານການການປິ່ນປົວທາງເອເລັກໂທຣນິກຂອງທ່ານ
- ທ່ານສາມາດຂໍເບິ່ງ ແລະ ຮັບເອົາສຳເນົາເອກະສານທາງເອເລັກໂທຣນິກຂອງບັນທຶກດ້ານການປິ່ນປົວຂອງທ່ານ ຫຼື ຂໍ້ມູນດ້ານສຸຂະພາບອື່ນໆຂອງທ່ານທີ່ພວກເຮົາມີ. ຖາມພວກເຮົາໄດ້ວ່າຕ້ອງເຮັດແນວໃດແນ່.
- ພວກເຮົາຈະສະໜອງສຳເນົາ ຫຼື ບົດສະຫຼຸບຂໍ້ມູນດ້ານສຸຂະພາບຂອງທ່ານ, ໂດຍປົກກະຕິພາຍໃນ 15 ມື້ຫຼັງຈາກທ່ານຂໍ. ພວກເຮົາອາດເກັບຄ່າທຳນຽມຕາມລາຄາທີ່ສົມເຫດສົມຜົນ.

### ຂໍໃຫ້ພວກເຮົາກວດແກ້ບົດບັນທຶກດ້ານການປິ່ນປົວຂອງທ່ານ
- ທ່ານສາມາດຂໍໃຫ້ພວກເຮົາກວດແກ້ຂໍ້ມູນດ້ານສຸຂະພາບກ່ຽວກັບທ່ານ ທີ່ທ່ານຄິດວ່າບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ. ຖາມພວກເຮົາໄດ້ວ່າຕ້ອງເຮັດແນວໃດແນ່.
- ພວກເຮົາອາດຈະຕອບວ່າ "ໄດ້" ຕໍ່ຄຳຂໍທີ່ສົມເຫດສົມຜົນທັງໝົດ.

### ຂໍການສື່ສານທີ່ເປັນຄວາມລັບ
- ທ່ານສາມາດຂໍໃຫ້ພວກເຮົາເພື່ອຕິດຕໍ່ຫາທ່ານໃນທາງສະເພາະ (ຕົວຢ່າງ: ໂທລະສັບບ້ານ ຫຼື ຫ້ອງການ) ຫຼື ສົ່ງຈົດໝາຍຫາທີ່ຢູ່ອື່ນ.
- ພວກເຮົາຈະຕອບວ່າ "ໄດ້" ຕໍ່ຄຳຂໍທີ່ສົມເຫດສົມຜົນ.

### ຂໍໃຫ້ພວກເຮົາຈຳກັດສິ່ງທີ່ພວກເຮົາໃຊ້ ຫຼື ແບ່ງປັນອອກໄປ
- ທ່ານສາມາດຂໍບໍ່ໃຫ້ພວກເຮົາໃຊ້ ຫຼື ແບ່ງປັນຂໍ້ມູນດ້ານສຸຂະພາບຂອງທ່ານບາງປະການ ສຳລັບການປິ່ນປົວ, ການຊຳລະເງິນ ຫຼື ການດຳເນີນງານຂອງພວກເຮົາ.
- ພວກເຮົາບໍ່ຈຳເປັນຕ້ອງຕົກລົງເຫັນດີກັບຄຳຂໍຂອງທ່ານ ແລະ ພວກເຮົາອາດຕອບວ່າ "ບໍ່" ຖ້າມັນຈະກະທົບກະເທືອນເຖິງການຮັກສາສຸຂະພາບຂອງທ່ານ.
- ຖ້າທ່ານຊຳລະເງິນໃຫ້ການການບໍລິການ ຫຼື ການຮັກສາສຸຂະພາບ ຈາກເງິນໃນຖົງຂອງທ່ານເອງ ເປັນຈຳນວນເຕັມ, ທ່ານສາມາດຂໍໃຫ້ພວກເຮົາບໍ່ແບ່ງປັນຂໍ້ມູນນັ້ນ ເພື່ອຈຸດປະສົງຂອງການຊຳລະເງິນ ຫຼື ການດຳເນີນງານຂອງພວກເຮົາກັບບໍລິສັດປະກັນສຸຂະພາບຂອງທ່ານ.
- ພວກເຮົາຈະຕອບວ່າ "ໄດ້" ຍົກເວັ້ນວ່າກົດໝາຍບັງຄັບໃຫ້ພວກເຮົາຕ້ອງແບ່ງປັກຂໍ້ມູນນັ້ນ.

### ຮັບເອົາລາຍຊື່ຂອງພາກສ່ວນທີ່ພວກເຮົາແບ່ງປັນຂໍ້ມູນ
- ທ່ານສາມາດຂໍເອົາລາຍການ (ບັນຊີລາຍການ) ຂອງເວລາທີ່ພວກເຮົາໄດ້ແບ່ງປັນຂໍ້ມູນດ້ານສຸຂະພາບຂອງທ່ານ ກ່ອນໜ້ານີ້ ຫົກ ປີຈົນເຖິງເວລາປະຈຸບັນທີ່ທ່ານຂໍ, ໃຜແນ່ທີ່ພວກເຮົາແບ່ງປັນຂໍ້ມູນ ແລະ ຍ້ອນຫຍັງ.

### ຮັບເອົາສຳເນົາແຈ້ງການການເປັນສ່ວນຕົວສະບັບນີ້
- ທ່ານສາມາດຂໍສຳເນົາເອກະສານຂອງແຈ້ງການສຳບັບນີ້ໄດ້ຕະຫຼອດເວລາ, ເຖິງວ່າທ່ານໄດ້ເຫັນດີຮັບເອົາທາງເອເລັກໂທຣນິກກໍ່ຕາມ. ພວກເຮົາຈະສະໜອງສຳເນົາເອກະສານໃຫ້ທັນທີ.

### ເລືອກໃຜຜູ້ໜຶ່ງເພື່ອເຮັດໜ້າທີ່ແທນທ່ານ
- ຖ້າທ່ານໃຫ້ໜັງສືມອບອຳນາດທາງການແພດໃຫ້ໃຜຜູ້ໜຶ່ງ ຫຼື ຖ້າມີຜູ້ປົກຄອງຕາມກົດໝາຍ, ບຸນຄົນນັ້ນສາມາດໃຊ້ສິດຂອງທ່ານ ແລະ ສາມາດຕັດສິນໃຈກ່ຽວກັບຂໍ້ມູນດ້ານສຸຂະພາບຂອງທ່ານໄດ້.
- ພວກເຮົາຈະຮັບປະກັນໃຫ້ແນ່ໃຈວ່າ ບຸກຄົນນັ້ນມີອຳນາດນີ້ ແລະ ສາມາດດຳເນີນການແທນທ່ານໄດ້ ກ່ອນທີ່ພວກເຮົາຈະລົງມືປະຕິບັດຕາມຄຳຂໍ.

### ຍື່ນຄຳຮ້ອງ ຖ້າທ່ານຮູ້ສຶກວ່າສິດຂອງທ່ານຖືກລະເມີດ
- ທ່ານສາມາດຍື່ນຄຳຮ້ອງໄດ້ ຖ້າທ່ານຮູ້ສຶກວ່າພວກເຮົາໄດ້ລະເມີດສິດຂອງທ່ານ ດ້ວຍການຕິດຕໍ່ຫາພວກເຮົາໂດຍໃຊ້ການຕິດຕໍ່ເຈົ້າໜ້າທີ່ດ້ານ ຂໍ້ມູນສ່ວນຕົວ ດັ່ງລຸ່ມນີ້.

**AltaMed Health Services Corporation**
Attention: Privacy Officer
2040 Camfield Avenue
Los Angeles, CA 90040
**(888) 499-9303**
**altamedprivacyoffice@altamed.org**

- ທ່ານຍັງສາມາດຍື່ນຄຳຮ້ອງທຸກກັບຫ້ອງການສິດທິພົນລະເມືອງຂອງກະຊວງສາທາລະນະສຸກ ແລະ ບໍລິການມະນຸດຂອງສະຫະລັດ ຫຼື ຫ້ອງການສິດທິພົນລະເມືອງຂອງກະຊວງສາທາລະນະສຸກ ແລະ ບໍລິການມະນຸດຂອງສະຫະລັດ ໄດ້ໂດຍການເຂົ້າໄປທີ່: **www.hhs.gov/ocr/privacy/hipaa/complaints/**

*ພວກເຮົາຈະບໍ່ຕອບໂຕ້ຂັດຄ້ານທ່ານໃນການຍື່ນຄຳຮ້ອງ.*

ສຳລັບຂໍ້ມູນດ້ານສຸຂະພາບບາງຢ່າງ, ທ່ານສາມາດບອກ AltaMed ກ່ຽວກັບທາງເລືອກຂອງທ່ານກ່ຽວກັບສິ່ງທີ່ພວກເຮົາແບ່ງປັນອອກໄປ. ຖ້າທ່ານມີ ຄວາມຕ້ອງການທີ່ຈະແຈ້ງວ່າພວກເຮົາຈະແບ່ງປັນຂໍ້ມູນຂອງທ່ານໃນສະຖານະການທີ່ອະທິບາຍໄວ້ລຸ່ມນີ້ແນວໃດ, ໃຫ້ທ່ານມາລົມກັບພວກເຮົາ. ບອກພວກເຮົາສິ່ງທີ່ທ່ານຕ້ອງການຈະເຮັດ ແລະ ພວກເຮົາຈະປະຕິບັດຕາມຄຳແນະນຳຂອງທ່ານ.

### ເຖິງຢ່າງໃດກໍ່ຕາມ, ທ່ານມີທັງສິດ ແລະ ທາງເລືອກທີ່ຈະບອກພວກເຮົາ:

ແບ່ງປັນຂໍ້ມູນກັບຄອບຄົວ, ໝູ່ເພື່ອນໃກ້ຊິດຂອງທ່ານ ຫຼື ບຸກຄົນອື່ນທີ່ມີສ່ວນໃນການຮັກສາສຸຂະພາບຂອງທ່ານ.

### ເພື່ອຈຸດປະສົງດ້ານການຕະຫຼາດ:

ການນຳໃຊ້ ແລະ ການແບ່ງປັນຂໍ້ມູນສຸຂະພາບສ່ວນຕົວ ຫຼື ຂໍ້ມູນສຸຂະພາບສ່ວນຕົວ (Protected Health Information, PHI) ຂອງທ່ານເພື່ອຈຸດປະສົງດ້ານການຕະຫຼາດສ່ວນຫຼາຍຈຳເປັນຕ້ອງໄດ້ຮັບອະນຸຍາດເປັນລາຍລັກອັກສອນຂອງທ່ານກ່ອນ, ພ້ອມກັບບາງຂໍ້ຍົກເວັ້ນເຊັ່ນ: ການຕະຫຼາດສຳລັບຜະລິດຕະພັນ, ການບໍລິການ ຫຼື ການອັບເດດຜູ້ໃຫ້ບໍລິການກ່ຽວຂ້ອງກັບສຸຂະພາບ.

### ໃນກໍລະນີການລະດົມທຶນ:

ພວກເຮົາອາດຈະຕິດຕໍ່ຫາທ່ານເພື່ອໃຫ້ຂໍ້ມູນກ່ຽວກັບກິດຈະກຳທີ່ໄດ້ຮັບການສະໜັບສະໜູນຈາກAltaMed, ລວມທັງໂຄງການງານລະດົມທຶນແລະການອອກງານຕ່າງໆ. ທ່ານອາດຈະເລືອກເຊົາຮັບການສື່ສານການລະດົມທຶນໄດ້ທຸກເວລາໂດຍການຕິດສູນບໍລິການຄົນເຈັບຂອງພວກເຮົາທີ່ເບີ **(888) 499-9303** ຫຼື ຕອບຫາການສື່ສານໃດໜຶ່ງດ້ວຍຄຳສະເໜີຂໍເລືອກອອກ. ການຕັດສິນໃຈຂອງທ່ານຈະບໍ່ມີຜົນກະທົບຕໍ່ການປິ່ນປົວ ຫຼື ການຈ່າຍຄ່າບໍລິການຂອງທ່ານ.

## ໂດຍທົ່ວໄປ AltaMed ອາດຈະໃຊ້ ຫຼື ແບ່ງປັນຂໍ້ມູນສຸຂະພາບຂອງທ່ານໃນທາງດັ່ງຕໍ່ໄປນີ້.

### ປິ່ນປົວທ່ານ

ພວກເຮົາສາມາດໃຊ້ຂໍ້ມູນສຸຂະພາບຂອງທ່ານ ແລະ ແບ່ງປັນຂໍ້ມູນນີ້ກັບນັກວິຊາການອື່ນໆຜູ້ທີ່ຈະໃຫ້ການປິ່ນປົວທ່ານ.

### ດຳເນີນການໃນອົງການຂອງພວກເຮົາ

ພວກເຮົາສາມາດນຳໃຊ້ ແລະ ແບ່ງປັນຂໍ້ມູນສຸຂະພາບຂອງທ່ານເພື່ອດຳເນີນວຽກງານຂອງພວກເຮົາ, ປັບປຸງການເບິ່ງແຍງສຸຂະພາບຂອງທ່ານ ແລະ ຕິດຕໍ່ຫາທ່ານເມື່ອຈຳເປັນ.

### ສົ່ງໃບເກັບເງິນສຳລັບການບໍລິການ

ພວກເຮົາສາມາດໃຊ້ ແລະ ແບ່ງປັນຂໍ້ມູນສຸຂະພາບຂອງທ່ານເພື່ອສົ່ງໃບເກັບເງິນ ແລະ ຮັບເອົາການຊຳລະເງິນຈາກ ແຜນປະກັນສຸຂະພາບ ແລະ ໜ່ວຍງານອື່ນໆ.

### ຊ່ວຍເຫຼືອດ້ານສາທາລະນະສຸກ ແລະ ບັນຫາຄວາມປອດໄພ

ພວກເຮົາສາມາດໃຊ້ ແລະ ແບ່ງປັນຂໍ້ມູນສຸຂະພາບຂອງທ່ານເພື່ອ: ການປ້ອງກັນພະຍາດ, ລາຍງານການລ່ວງລະເມີດທີ່ໜ້າສົງໃສ, ການປ່ອຍປະລະເລີຍ, ຫຼື ຄວາມຮຸນແຮງໃນຄອບຄົວ, ປ້ອງກັນ ແລະ ຫຼຸດຜ່ອນການຄຸກຄາມຮ້າຍແຮງຕໍ່ສຸຂະພາບ ແລະ ຄວາມປອດໄພໃຜຜູ້ໜຶ່ງ.

### ທຳການຄົ້ນຄວ້າວິໃຈ

- ພວກເຮົາສາມາດໃຊ້ ແລະ ແບ່ງປັນຂໍ້ມູນສຸຂະພາບຂອງທ່ານເພື່ອດຳເນີນການຄົ້ນຄວ້າວິໃຈດ້ານສຸຂະພາບ.

### ປະຕິບັດຕາມກົດໝາຍ

- ພວກເຮົາຈະແບ່ງປັນຂໍ້ມູນກ່ຽວກັບທ່ານ, ຖ້າກົດໝາຍພາຍໃນລັດ ຫຼື ລັດຖະບານກາງຕ້ອງການ, ລວມທັງສະຊວງສາທາລະນະສຸກ ແລະ ການບໍລິການມະນຸດ ຖ້າພວກເຂົາຕ້ອງການຈະເບິ່ງວ່າພວກເຮົາປະຕິບັດຕາມກົດໝາຍການຮັກສາຂໍ້ມູນສ່ວນຕົວຂອງລັດຖະບານກາງ ຫຼື ບໍ່.

### ຮ່ວມງານກັບເຈົ້າໜ້າທີ່ກວດສອບການເສຍຊີວິດ ຫຼື ຜູ້ກຳນວຍການພິທີຊາປານະກິດສົບ

- ພວກເຮົາສາມາດແບ່ງປັນຂໍ້ມູນສຸຂະພາບກັບ ເຈົ້າໜ້າທີ່ຊັນນະສູດສົບ, ເຈົ້າໜ້າທີ່ກວດສອບການເສຍຊີວິດ, ຫຼື ອຳນວຍການພິທີຊາປານະກິດສົບເວລາມີບຸກຄົນເສຍຊີວິດ.

### ການຈັດການກັບຄ່າຊົດເຊີຍໃຫ້ຄົນງານ, ການບັງຄັບໃຊ້ກົດໝາຍ ແລະ ຄຳຂໍອື່ນໆຂອງລັດຖະບານ

- ພວກເຮົາສາມາດໃຊ້ ແລະ ແບ່ງປັນຂໍ້ມູນສຸຂະພາບຂອງທ່ານ: ເພື່ອການຮຽກຮ້ອງຄ່າຊົດເຊີຍໃຫ້ຄົນງານ, ເພື່ອຈຸດປະສົງໃນການບັງຄັບໃຊ້ກົດໝາຍ ຫຼື ກັບເຈົ້າໜ້າທີ່ຕຳຫຼວດ, ກັບອົງກອນຕົວແທນກຳກັບດູແລດ້ານສຸຂະພາບສຳລັບກິດຈະກຳທີ່ໄດ້ຮັບອະນຸມັດຕາມກົດໝາຍ, ເພື່ອການດຳເນີນງານພິເສດຂອງລັດຖະບານເຊັ່ນ: ການທະຫານ, ຄວາມໝັ້ນຄົງຂອງຊາດ ແລະ ໜ່ວຍງານຮັກສາຄວາມປອດໄປຂອງປະທານາທິບໍດີ.

### ຕອບສະໜອງການຟ້ອງຮ້ອງຄະດີ ແລະ ການດຳເນີນການດ້ານກົດໝາຍ

- ພວກເຮົາສາມາດແບ່ງປັນຂໍ້ມູນສຸຂະພາບຂອງທ່ານເພື່ອປະຕິບັດຕາມຄຳສັ່ງຂອງສານ ຫຼື ຄຳສັ່ງຈາການປົກຄອງ, ຫຼື ເພື່ອຕອບສະໜອງຕາມໜັງສືແຈ້ງການຈາກສານ.

### ພວກເຮົາຕ້ອງປະຕິບັດຕາມກົດໝາຍເພື່ອຮັກສາຂໍ້ມູນສ່ວນຕົວ ແລະ ຄວາມປອດໄພຂອງຂໍ້ມູນສຸຂະພາບທີ່ຖືກຄຸ້ມຄອງຂອງທ່ານ

- ພວກເຮົາຈະແຈ້ງໃຫ້ທ່ານຊາບທັນທີ ຖ້າມີການຮົ່ວໄຫຼເກີດຂຶ້ນ ເຊິ່ງອາດເປັນອັນຕະລາຍຕໍ່ຂໍ້ມູນສ່ວນຕົວ ຫຼື ຄວາມປອດໄພຂອງຂໍ້ມູນຂອງທ່ານ.

- ພວກເຮົາຈະບໍ່ໃຊ້ ຫຼື ແບ່ງປັນຂໍ້ມູນຂອງທ່ານ ນອກເໜືອຈາກທີ່ໄດ້ອະທິບາຍໄວ້ທີ່ນີ້ ຍົກເວັ້ນວ່າທ່ານຈະບອກພວກເຮົາວ່າພວກເຮົາເຮັດໄດ້ເປັນລາຍລັກອັກສອນ. ຖ້າທ່ານບອກພວກເຮົາວ່າພວກເຮົາເຮັດໄດ້, ທ່ານອາດປ່ຽນໃຈໄດ້ຕະຫຼອດເວລາ. ແຈ້ງໃຫ້ພວກເຮົາຮູ້ ເປັນລາຍລັກອັກສອນ ຖ້າທ່ານປ່ຽນໃຈ.

- ພວກເຮົາຕ້ອງປະຕິບັດຕາມໜ້າທີ່ ແລະ ການປະຕິບັດການຮັກສາຂໍ້ມູນສ່ວນຕົວ ທີ່ໄດ້ອະທິບາຍໄວ້ໃນແຈ້ງການສະບັບນີ້ ແລະ ໃຫ້ທ່ານມີສະບັບສຳເນົາໄວ້.

- ພວກເຮົາສາມາດປ່ຽນ ຂໍ້ກຳນົດຂອງແຈ້ງການສະບັບນີ້, ແລະ ແຈ້ງການສະບັບໃໝ່ຈະມີພ້ອມໃຫ້ທ່ານເມື່ອທ່ານຂໍ.

### ເພື່ອຈະໄດ້ສຳເນົາລະອຽດຂອງແຈ້ງການສະບັບນີ້, ທ່ານສາມາດຕິດຕໍ່ຫາ:

- ເຈົ້າໜ້າທີ່ຮັກສາຂໍ້ມູນສ່ວນຕົວຂອງ AltaMed
- ຕິດຕໍ່ຫາຄລີນິກທີ່ທ່ານຮັບການເບິ່ງແຍງດູແລ

ເພື່ອເບິ່ງແຈ້ງການເລື່ອງການປະຕິບັດການຮັກສາຂໍ້ມູນສ່ວນຕົວສະບັບປັດຈຸບັນ, ເຂົ້າໄປທີ່ www.AltaMed.org/regulatory-notices ຫຼື ສະແກນລະຫັດ QR ນີ້:

*ແຈ້ງການກ່ຽວກັບບົດສະຫຼຸບການປະຕິບັດການຮັກສາຂໍ້ມູນສ່ວນຕົວມີຜົນບັງຄັບໃຊ້ນັບແຕ່ວັນທີ 6/15/23*

PROJ14193.KN.0623